# ນະໂຍບາຍ ແລະ ແນວທາງປະຕິບັດໃນການໂຄສະນາ

ນະໂຍບາຍການໂຄສະນາທົ່ວໄປ

- ໂຄສະນາຕ້ອງສອດຄ່ອງກັບຂໍ້ກຳນົດທາງເຕັກນິກ ຕາມການນຳກົດຂອງ ອິດສະຫຼະ.ຄອມ
- ໂຄສະນາຕ້ອງບໍ່ເປັນການເຮັດໃຫ້ເຂົ້າໃຈຜິດ ຫຼື ເປັນການຫຼອກລວງ
- ໂຄສະນາຕ້ອງເປັນໄປຕາມລະບຽບກົດໝາຍບ້ານເມືອງ
- ຜູ້ໂຄສະນາຕ້ອງຍອມຮັບຂໍ້ຕົກລົງ ແລະ ເງື່ອນໄຂການໂຄສະນາຂອງ ອິດສະຫຼະ.ຄອມ
- ອິດສະຫຼະ.ຄອມ ອາດຕ້ອງຈຳກັດຄວາມຮັບຜິດຊອບ ເພື່ອແຍກຄວາມແຕກຕ່າງການໂຄສະນາຈາກເນື້ອໃນຂອງ ອິດສະຫຼະ.ຄອມ ແລະ ຈະມີການລະບຸວ່າເປັນການໂຄສະນາທີ່ໄດ້ຮັບຜົນຕອບແທນ ເພື່ອສະແດງໃຫ້ເຫັນວ່າ ນັ້ນບໍ່ແມ່ນມຸມມອງ ຫຼື ທັດສະນະຂອງພວກເຮົາ
- ອິດສະຫຼະ.ຄອມ ຂໍສະຫງວນສິດທີ່ຈະປະຕິເສດການໂຄສະນາໃດໆກໍ່ຕາມ ດ້ວຍເຫດຜົນໃດກໍ່ຕາມທີ່ຂຶ້ນຢູ່ກັບການຕັດສິນໃຈຂອງພວກເຮົາ
- ຜູ້ໂຄສະນາຕ້ອງຢືນຢັນເປັນລາຍລັກອັກສອນ ວ່າຕົນມີສິດໃຊ້ຊັບສິນທາງປັນຍາຂອງບຸກຄົນທີ່ສາມເຊັ່ນ: ເຄື່ອງໝາຍການຄ້າ, ກຣາບຟິກ ແລະ ອື່ນໆ
- ເຄື່ອງໝາຍຂອງ ອິດສະຫຼະ.ຄອມ ບໍ່ສາມາດໃຊ້ໃນການໂຄສະນາໄດ້ ຫາກບໍ່ໄດ້ຮັບການຍິນຍອມເປັນລາຍລັກອັນສອນລ່ວງໜ້າ

ນະໂຍບາຍໂຄສະນາສະເພາະ

- ການແບ່ງແຍກ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາທີ່ມີຮູບພາບ ຫຼື ຂໍ້ຄວາມທີ່ເຮັດໃຫ້ເກີດອະຄະຕິ, ການເລືອກປະຕິບັດຕໍ່ເຊື້ອຊາດ, ສາສະໜາ, ຄວາມພິການ, ເພດ, ອາຍຸ ຫຼື ລົດສະນິຍົມທາງເພດ.
- ການພະນັນ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາທີ່ເປັນການສົ່ງເສີມການພະນັນທຸກຮູບແບບ ທັງຖືກ ແລະ ຜິດກົດໝາຍ.
- ຢາສູບ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາຢາສູບ, ຍີ່ຫໍ້ຢາສູບ ຫຼື ຜະລິດຕະພັນຢາສູບ.
- ເຄື່ອງດື່ມມືນເມົາ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາເຄື່ອງດື່ມມຶນເມົາ, ຍີ່ຫໍ້ເຄື່ອງດື່ມມຶນເມົາ ຫຼື ຜະລິດຕະພັນມຶນເມົາ.
- ອາວຸດ ແລະ ວັດຖຸລະເບີດ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາອາວຸດ ແລະ ວັດຖຸລະເບີດ.
- ສາສະໜາ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາຈາກອົງກອນທາງສາສະໜາ.
- ການເມືອງ
  ອິດສະຫຼະ.ຄອມ ບໍ່ຮັບໂຄສະນາຈາກພັກການເມືອງ ຫຼື ນັກການເມືອງ, ແຕ່ ອິດສະຫຼະ.ຄອມ ຈະເຜີຍແຜ່ນະໂຍບາຍຕ່າງໆ ທີ່ຜ່ານການຮັບຮອງໂດຍລັດຖະບານ ທັງສູນກາງ ແລະ ທ້ອງຖິ່ນ.

ແນວທາງໃນການສ້າງສື່ໂຄສະນາ

- ສື່ໂຄສະນາທັງໝົດ ຕ້ອງໄດ້ຮັບການອະນຸມັດເປັນລາຍບຸກຄົນ ຫຼື ລາຍກໍລະນີ.
- ເນື້ອໃນຂອງການໂຄສະນາ ຕ້ອງແຍກໄດ້ຢ່າງຊັດເຈນຈາກເນື້ອໃນປົກກະຕິໃນເວັບ (ເຊັ່ນ: ໂຄສະນາຕ້ອງມີເສັ້ນຂອບທີ່ກຳນົດໄວ້ຢ່າງຊັດເຈນ ແລະ ບໍ່ສັບສົນກັບເນື້ອໃນຂອງໜ້າເວັບປົກກະຕິ).
- ຫາກໂຄສະນາມີສຽງ, ສຽງຈະເປີດກໍ່ຕໍ່ເມື່ອຜູ້ໃຊ້ຄລິກ ແລະ ສະຖານະເລີ່ມຕົ້ນຕ້ອງຖືກປິດສຽງ
- ວິດີໂອຕ້ອງມີປຸ່ມຫຼິ້ນ/ຢຸດຊົ່ວຄາວ ແລະ ປຸ່ມຄວບຄຸມສຽງ/ລະດັບສຽງ.
- ທຸກການກົດຄລິກຜ່ານ URL ຈະຕ້ອງເປີດໃນໜ້າໃໝ່ຂອງບຣາວເຊີ.
- ບໍ່ຄວນມີເກີນ 2 Tracking pixels ໃນໂຄສະນາອັນດຽວ.
- ໂຄສະນາທີ່ຢູ່ໂຮສຂອງບຸກຄົນທີ່ສາມ ຕ້ອງຮອງຮັບ SSL.

ໄລຍະເວລາການສົ່ງສື່ໂຄສະນາ

- 3 ວັນລັດຖະການ ກ່ອນວັນຂຶ້ນໂຄສະນາໃນເວັບ ສໍາລັບສື່ໂຄສະນາແບບມາດຕະຖານທົ່ວໄປ
- 5 ວັນລັດຖະການ ກ່ອນວັນຂຶ້ນໂຄສະນາໃນເວັບ ສໍາລັບສື່ໂຄສະນາທີ່ເປັນ tag ທີ່ສ້າງໂດຍລູກຄ້າ ແລະ ບຸກຄົນທີສາມ.

*ນະໂຍບາຍເຫຼົ່ານີ້ ສ້າງຂຶ້ນເພື່ອເປັນແນວທາງທົ່ວໄປເທົ່ານັ້ນ, ອິດສະຫຼະ.ຄອມ ຂໍສະຫງວນສິດໃນການປະຕິເສດການໂຄສະນາໃດໆກໍ່ຕາມດ້ວຍເຫດຜົນໃດກໍ່ຕາມ, ສໍາລັບລາຍລະອຽດຂອງຫຼັກເກນເຫຼົ່ານີ້ ແລະ ອື່ນໆ ສາມາດສອບຖາມເພີ່ມເຕີມໄດ້ທີ່ idsala.com@gmail.com.*